| ລາຍລະອຽດຂໍ້ມູນທີ່ໄດ້ຮັບ | | |
|---|---|---|
| ຊື່ໃບອະນຸຍາດ | ວີຊາແຮງງານ (LA-B2) | |
| ປະເພດຂອງໃບອະນຸຍາດ | ອື່ນໆ | |
| ເລກລະຫັດໃບອະນຸຍາດ | ວັນທີ | ໜ່ວຍງານຮັບຜິດຊອບ |
| MoFA-CD-4 | 14.11.2017 | ກົມກົງສຸນ |

| ຂໍ້ມູນພື້ນຖານ | |
|---|---|
| ຮູບແບບການສົ່ງຄໍາຮ້ອງ | ຢູ່ທີ່ຫ້ອງການເຈົ້າຫນ້າທີ່ |
| ປະເພດທຸລະກິດ ສະເພາະ ທີ່ຕິດພັນກັບ ໃບອະນຸຍາດ | ທຸກພາກສ່ວນ |
| ຈຸດປະສົງທີ່ຕ້ອງຂໍ ໃບອະນຸຍາດ | ເພື່ອຄຸ້ມຄອງ, ຕິດຕາມ, ກວດກາ ແລະ ເກັບກໍາສະຖິຕິ ການເຂົ້າ-ອອກປະເທດຂອງຄົນຕ່າງປະເທດ ແລະ ສ້າງສະຖິຕິຕິດຕາມຈຸດປະສົງໃນການເຂົ້າມາຂອງຄົນຕ່າງປະເທດ ໃນ ສປປ ລາວ. |
| ຜູ້ທີ່ຕ້ອງຂໍໃບອະນຸຍາດ | ນິຕິບຸກຄົນ ທີ່ມີວັດຖຸປະສົງ ນໍາເຂົ້າຕ່າງປະເທດ ເພື່ອເຮັດວຽກ ຕ້ອງໄດ້ສົ່ງໃບສະເໜີ ໃຫ້ ລູກຈ້າງຂອງນິຕິບຸກຄົນດັ່ງກ່າວ ແລະ ຄົນຕ່າງປະເທດທີ່ມີຈຸດປະສົງທີ່ຈະເຮັດວຽກ ໃຫ້ແກ່ ນິຕິບຸກຄົນດັ່ງກ່າວ ຕ້ອງໄດ້ຂໍວີຊາ. |
| ມີຂໍ້ມູນໃບອະນຸຍາດ ອອນລາຍບໍ່? | ບໍ່ມີ |
| ທີ່ຢູ່ຂອງຂໍ້ມູນອອນລາຍ | |
| ມີແບບຟອມໃບຄໍາຮ້ອງ ໃບອະນຸຍາດ ຫລືບໍ່? | ບໍ່ມີ |
| ຄໍາເຫັນອື່ນ ທີ່ຕິດພັນ ກັບ ໃບອະນຸຍາດ | ວິສາຫະກິດທີ່ຂໍອອກວີຊາ ໃຫ້ແກ່ ແຮງງານຕ່າງປະເທດ ຕ້ອງສົ່ງໃບສະເໜີທີ່ມີເນື້ອໃນຕາມແບບຟອມທີ່ກໍານົດ |

| ຄຸນະສົມບັດ ແລະ ເອກະສານປະກອບ | | |
|---|---|---|
| ໄລຍະເວລາໃນການ ພິຈາລະນາຄໍາຮ້ອງ ໃນ ການອອກໃບອະນຸຍາດ | 6 | ກົດໝາຍກ່ຽວຂ້ອງບໍ່ໄດ້ລະບຸໄລຍະເວລາໃນການພິຈາລະນາອອກວີຊາໄວ້ ແຕ່ເຈົ້າໜ້າທີ່ແຈ້ງວ່າ ໃນກໍລະນີເອກະສານຄົບຖ້ວນ ແມ່ນໃຊ້ໄລຍະເວລາໃນການພິຈາລະນາ 3 ວັນລັດຖະການ ຕໍ່ວີຊາ ທັງນີ້ |

| ຄຸນະສົມບັດ ແລະ ເອກະສານປະກອບ | | |
|---|---|---|
| | | ການຂໍວີຊາແມ່ນ ຕ້ອງໄດ້ຂໍເປັນ 2 ວີຊາ ຄື 1) ວີຊາເຂົ້າອອກປະເທດເທື່ອດຽວ ເພື່ອການຂໍບັດແຮງງານ ແລະ ບັດພັກເຊົາ; ແລະ 2) ວີຊາເຂົ້າອອກຫລາຍເທື່ອ |
| **ຄຸນະສົມບັດຂອງຜູ້ຂໍໃບອະນຸຍາດ** | 1. ວິສາຫະກິດທີ່ຂໍວີຊາແຮງງານ ໃຫ້ແກ່ ແຮງງານຕ່າງປະເທດ ຕ້ອງໄດ້ຮັບການສ້າງຕັ້ງຖືກຕ້ອງ ພາຍໃຕ້ ກົດໝາຍແຫ່ງ ສປປ ລາວ ແລະ ຕ້ອງໄດ້ຮັບອະນຸຍາດໂຄວຕ້າແຮງງານ ຕາມກົດໝາຍ; 2. ແຮງງານຕ່າງປະເທດ ຕ້ອງມີສັນຍາວ່າຈ້າງແຮງງານ ແລະ ສັງກັດຢູ່ກັບ ວິສາຫະກິດໃດໜຶ່ງ ລວມທັງ ຕ້ອງໄດ້ຮັບວີຊາເຂົ້າອອກເທື່ອດຽວ, ໃບອະນຸຍາດເຮັດວຽກ ແລະ ໃບອະນຸຍາດພັກເຊົາ ຈາກໜ່ວຍງານກ່ຽວຂ້ອງ ພາຍໃຕ້ກົດໝາຍແຫ່ງ ສປປ ລາວ | |
| **ມີເຫດຜົນໃດບໍ່ທີ່ເຈົ້າໜ້າທີ່ ຈະປະຕິເສດການຂໍໃບອະນຸຍາດ?** | ປະຕິເສດ ສະເພາະ ໃນກໍລະນີທີ່ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ຫລື ກະຊວງປ້ອງກັນຄວາມສະຫງົບ ປະຕິເສດການເຂົ້າມາເຮັດວຽກ ຫລື ການເຂົ້າມາຢູ່ພັກເຊົາຂອງ ແຮງງານຕ່າງປະເທດດັ່ງກ່າວ | |

| ຂໍ້ມູນຕິດພັນກັບ ການຕໍ່ອາຍຸໃບອະນຸຍາດ | |
|---|---|
| **ໃບອະນຸຍາດມີກໍານົດອາຍຸ ຫລືບໍ່?** | **ໃບອະນຸຍາດມີອາຍຸນໍາໃຊ້ ຈັກເດືອນ?** |
| ແມ່ນແລ້ວ | 12 |
| **ຂັ້ນຕອນ ແລະ ເງື່ອນໄຂ ສໍາລັບການຕໍ່ອາຍຸໃບອະນຸຍາດ** | ໄລຍະເວລາໃນການອອກໃບອະນຸຍາດນີ້ແມ່ນຂຶ້ນກັບ ໄລຍະເວລາຕາມສັນຍາວ່າຈ້າງແຮງງານທີ່ ແຮງງານຕ່າງປະເທດມີ ຊຶ່ງອາດເປັນໄລຍະເວລາ 3 ເດືອນ, 6 ເດືອນ ຫລື 12 ເດືອນ, ຕ້ອງໄດ້ຮັບການອະນຸຍາດເຮັດວຽກຈາກ ກະຊວງແຮງງານ ແລະ ອະນຸຍາດພັກເຊົາຈາກ ກົມຕໍາຫຼວດຄຸ້ມຄອງຄົນຕ່າງປະເທດ. |

| ຄ່າທໍານຽມ | | | | |
|---|---|---|---|---|
| **ມີຄ່າທໍານຽມແບບຟອມຄໍາ ຮ້ອງ ຫລື ບໍ່?** | **ຄ່າບໍລິການວິຊາການ** | **ຄ່າທໍານຽມ** | **ຄ່າແບບຟອມຄໍາຮ້ອງ** | **ຄ່າໃຊ້ຈ່າຍທັງໝົດ** |
| ແມ່ນແລ້ວ | 20000.00 | 1200000.00 | 25000.00 | 1245000.00 |
| **ຄໍາເຫັນ** | - ອີງຕາມລັດຖະບັນຍັດປະທານປະເທດ, ເລກທີ 003/ປທ - ສໍາລັບຄ່າທໍານຽມຈະມີຄ່າທໍານຽມຂໍວີຊ່າກັບດ່ານແມ່ນຕັ້ງແຕ່ 20-42$ ຂຶ້ນກັບການເຂົ້າມາແຕ່ປະເທດໃດ (ອີງຕາມ ແຈ້ງການເລກທີ 256/ຕປທ.ກກສ1, ລົງວັນທີ 25 ກຸມພາ 2009) - ຄ່າບໍລິການວີຊ່າກັບດ່ານ ແມ່ນຄົນລະ 5,000 ກີບຕໍ່ຄົນ ແລະ | | | |

| ຄ່າທໍານຽມ | |
|---|---|
| | ຄ່າບໍລິການສໍາລັບການອອກວີຊ່າຢູ່ ສະຖານທູດ ແລະ ສະຖານກົງສຸນໃຫຍ່ ຢູ່ຕ່າງປະເທດ ແມ່ນ 20,000 ກີບຕໍ່ສະບັບ |

| ຄ່າທໍານຽມການຕໍ່ອາຍຸ | | | | |
|---|---|---|---|---|
| ມີຄ່າທໍານຽມ ແບບຟອມ ຄໍາຮ້ອງ ຂໍຕໍ່ອາຍຸ ຫລືບໍ່? | ຄ່າບໍລິການວິຊາການ | ຄ່າທໍານຽມ | ຄ່າ ແບບຟອມ ຄໍາຮ້ອງ | ຄ່າໃຊ້ຈ່າຍທັງໝົດ |
| ແມ່ນແລ້ວ | 20000.00 | 1200000.00 | 25000.00 | 1245000.00 |
| ຄໍາເຫັນ | - ອີງຕາມລັດຖະບັນຍັດປະທານປະເທດ, ເລກທີ 003/ປທ - ສໍາລັບຄ່າທໍານຽມຈະມີຄ່າທໍານຽມຂໍວີຊ່າກັບດ່ານແມ່ນຕັ້ງແຕ່ 20-42$ ຂຶ້ນກັບການເຂົ້າມາແຕ່ປະເທດໃດ (ອີງຕາມ ແຈ້ງການເລກທີ 256/ຕປທ.ກກສ1, ລົງວັນທີ 25 ກຸມພາ 2009) - ຄ່າບໍລິການວີຊ່າກັບດ່ານ ແມ່ນຄົນລະ 5,000 ກີບຕໍ່ຄົນ ແລະ ຄ່າບໍລິການສໍາລັບການອອກວີຊ່າຢູ່ ສະຖານທູດ ແລະ ສະຖານກົງສຸນໃຫຍ່ ຢູ່ຕ່າງປະເທດ ແມ່ນ 20,000 ກີບຕໍ່ສະບັບ | | | |

| ກົດລະບຽບທີ່ກ່ຽວຂ້ອງ | | | |
|---|---|---|---|
| ຊື່ກົດລະບຽບ | ເລກທີ | ວັນທີ | ຄໍາເຫັນ |
| ກົດໝາຍວ່າດ້ວຍ ການເຂົ້າ-ອອກ ແລະ ຄຸ້ມຄອງຄົນຕ່າງປະເທດ ຢູ່ ສປປ ລາວ | 59/ສພຊ | 26.12.2014 | ໝວດທີ 4 ປະເພດ ແລະ ການອອກວີຊາເຂົ້າ-ອອກ ສປປ ລາວ (ມາດຕາ 19 ຫາມາດຕາ 22) |

| ເອກະສານປະກອບ |
|---|
| ຊື່ເອກະສານ |
| ສໍາເນົາພາດສະປອດ / ໜັງສືຜ່ານແດນ |
| ໃບອະນຸຍາດເຮັດວຽກ ແລະ ການຂໍຂຶ້ນທະບຽນແຮງງານຕ່າງປະເທດ |
| ໃບອະນຸຍາດພັກເຊົາສໍາລັບນັກລົງທຶນຕ່າງປະເທດ |
| ໃບສະເໜີ |

| ເອກະສານປະກອບ |
|---|
| ໂກຕ້ານໍາເຂົ້າແຮງງານຕ່າງປະທດ |
| ການຂໍອະນຸຍາດນໍາເຂົ້າແຮງງານຕ່າງປະເທດ |

| ສະຖິຕິ (ທີ່ອອກໃໝ່ ຫລື ທີ່ຕໍ່ອາຍຸ) | | |
|---|---|---|
| ປີ | ອອກໃໝ່ | ຕໍ່ອາຍຸ |
| 2017 | 70000 | 0 |